ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 109 ປປທ

ນະຄອນຫຼວງວຽງຈັນ, ວັນທີ 18 ສິງຫາ 2008

# ລັດຖະດຳລັດ

## ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທັດຖະກຳ

~~~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 95/ສພຊ, ລົງວັນທີ 25 ກໍລະກົດ 2008 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ທັດຖະກຳ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 23/ຄປຈ, ລົງວັນທີ 11 ສິງຫາ 2008.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ທັດຖະກຳ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 95 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ທັດຖະກຳ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະ ພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ທັດຖະກຳ ໃນວາລະປະຊຸມຕອນບ່າຍຂອງວັນທີ 25 ກໍລະກົດ 2008,

### ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ທັດຖະກຳ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫລາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 25 ກໍລະກົດ 2008

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ

ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 02 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ກໍລະກົດ 2008

# ກົດໝາຍ
# ວ່າດ້ວຍຫັດຖະກໍາ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍວ່າດ້ວຍຫັດຖະກໍາ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການສົ່ງເສີມ ແລະ ການພັດທະນາ ວຽກງານຫັດຖະກໍາ ເພື່ອເຮັດໃຫ້ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານດັ່ງກ່າວ ມີການຂະຫຍາຍຕົວ, ສ້າງຜະລິດຕະພັນຫັດຖະກໍາ ໃຫ້ກາຍເປັນສິນຄ້າ ທີ່ມີຄຸນນະພາບສູງ ແນໃສ່ສ້າງວຽກເຮັດງານທໍາ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນບັນດາເຜົ່າ ທັງເປັນການອະນຸລັກມູນເຊື້ອ, ສີໄມ້ລາຍມືທີ່ມີຄຸນຄ່າທາງດ້ານສິນລະປະ ວັດທະນະທໍາ ແລະ ເສດຖະກິດ ຊຶ່ງມີມາແຕ່ບູຮານນະການໃຫ້ຍືນຍົງຄົງຢູ່ຕະຫຼອດໄປ.

### ມາດຕາ 2. ຫັດຖະກໍາ

ຫັດຖະກໍາ ແມ່ນ ຂະບວນການຜະລິດ ຂອງຂະແໜງເສດຖະກິດໜຶ່ງທີ່ສໍາຄັນ ຊຶ່ງນໍາໃຊ້ແຮງງານທີ່ມີຄວາມຊໍານານງານ ແລະ ພູມປັນຍາ ຂອງຄົນເປັນຕົ້ນຕໍ ເພື່ອສ້າງເປັນຜະລິດຕະພັນທີ່ມີຄວາມປານີດງົດງາມ, ມີຄຸນຄ່າສູງທາງດ້ານສິນລະປະວັດທະນະທໍາ, ເສດຖະກິດ ແລະ ມີເອກະລັກສະເພາະຕົວ.

### ມາດຕາ 3. ຄຸນລັກສະນະຕົ້ນຕໍຂອງຜະລິດຕະພັນຫັດຖະກໍາ

ຄຸນລັກສະນະຕົ້ນຕໍຂອງຜະລິດຕະພັນຫັດຖະກໍາ ມີ ດັ່ງນີ້:

1. ນໍາໃຊ້ແຮງງານຄົນເປັນຕົ້ນຕໍ ແລະ ສາມາດນໍາໃຊ້ເຄື່ອງຈັກຊ່ວຍແຮງຈໍານວນໜຶ່ງ;
2. ມີຄຸນຄ່າສູງທາງດ້ານສິນລະປະ ວັດທະນະທໍາ ແລະ ເສດຖະກິດ;

3. ມີເອກະລັກສະເພາະຕົວ;
4. ຜະລິດເພື່ອຊົມໃຊ້ ແລະ ເປັນສິນຄ້າ;
5. ມີເອກະລັກຂອງຊາດ, ຂອງທ້ອງຖິ່ນ ແລະ ບັນດາເຜົ່າ;
6. ມີລັກສະນະປະຫວັດສາດຂອງແຕ່ລະຍຸກ ແຕ່ລະສະໄໝ.

### ມາດຕາ 4. ການອະທິບາຍຄໍາສັບ

ຄໍາສັບຕ່າງໆທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ປະກອບການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງລວມໝູ່ຂອງປະຊາຊົນ ທີ່ລົງທຶນ, ດໍາເນີນການຜະລິດ ແລະ ບໍລິການຈໍາໜ່າຍ ສິນຄ້າຫັດຖະກໍາ;
2. ຊາວຊ່າງຫັດຖະກໍາ ໝາຍເຖິງ ຊ່າງຫັດຖະກໍາ ແລະ ນາຍຊ່າງຫັດຖະກໍາ ຊຶ່ງເປັນ ຜູ້ຜະລິດ ຫຼື ຜູ້ດໍາເນີນການ ກ່ຽວກັບການຜະລິດຫັດຖະກໍາ;
3. ກິດຈະການ ໝາຍເຖິງ ບັນດາວຽກງານທີ່ດໍາເນີນຢູ່ໃນໂຮງງານຫັດຖະກໍາ ແລະ ໂຮງຊ່າງຫັດຖະກໍາຄອບຄົວ;
4. ເຈົ້າໜ້າທີ່ ໝາຍເຖິງ ພະນັກງານວິຊາການທີ່ຖືກແຕ່ງຕັ້ງ ຫຼື ຖືກມອບໝາຍໜ້າທີ່ຈາກການຈັດຕັ້ງຂັ້ນເທິງ ເພື່ອປະຕິບັດວຽກງານຫັດຖະກໍາ;
5. ການບໍາບັດສິ່ງເສດເຫຼືອ ໝາຍເຖິງ ການປັບປຸງ, ດັດແປງ ສິ່ງເສດເຫຼືອ ຫຼື ມົນລະພິດ ຈາກການຜະລິດຫັດຖະກໍາ ໃຫ້ຫຼຸດຜ່ອນລົງ ເຊັ່ນ: ນໍ້າເປື້ອນ, ສຽງ, ກິ່ນ ແລະ ມົນລະພິດອື່ນ;
6. ລະບົບຄໍ້າປະກັນສິນເຊື່ອທະນາຄານ ໝາຍເຖິງ ການຄໍ້າປະກັນ ດ້ວຍຊັບສິນຂອງຜູ້ກູ້ຢືມ ຫຼື ດ້ວຍການຈັດຕັ້ງ ຫຼື ບຸກຄົນອື່ນ;
7. ພາຫະນະສື່ມວນຊົນ ໝາຍເຖິງ ສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ ລວມທັງ ຜະລິດຕະພັນສື່ມວນຊົນ ຊຶ່ງມີໜັງສືພິມ, ໃບຂ່າວສານ, ຈົດໝາຍເຫດ, ວາລະສານ, ລາຍການວິທະຍຸ, ລາຍການໂທລະພາບ, ລາຍການໂທລະໂຄ່ງ, ອິນເຕີເນັດ, ເວບໄຊ, ກາແຊັດ, ຊີດີ, ວີຊີດີ, ດີວີດີ ແລະ ອື່ນໆ;
8. ໂລຫະ ໝາຍເຖິງ ວັດຖຸທີ່ນໍາຜ່ານກະແສໄຟຟ້າ ເຊັ່ນ: ເຫຼັກ, ທອງ, ຄໍາ,ເງິນ ແລະ ວັດຖຸອື່ນ;
9. ອະໂລຫະ ໝາຍເຖິງ ວັດຖຸທີ່ບໍ່ນໍາຜ່ານກະແສໄຟຟ້າ ເຊັ່ນ: ແກ້ວ, ຢາງພະລາສະຕິກ, ໄມ້ ແລະວັດຖຸອື່ນ;
10. ກໍາມະວິທີ ໝາຍເຖິງ ວິທີການ ແລະ ຂັ້ນຕອນ ການຜະລິດ ;
11. ເຈ້ຍພື້ນເມືອງ ໝາຍເຖິງ ເຈ້ຍທີ່ເຮັດດ້ວຍ ເປືອກສາ, ໜໍ່ໄມ້, ເຟືອງ ແລະ ພືດອື່ນ.

### ມາດຕາ 5. ນະໂຍບາຍກ່ຽວກັບວຽກງານຫັດຖະກໍາ

ລັດ ມີນະໂຍບາຍກ່ຽວກັບວຽກງານຫັດຖະກໍາ ເຊັ່ນ: ນະໂຍບາຍ ການຄຸ້ມຄອງ, ການສົ່ງເສີມ ແລະ ພັດທະນາ, ການອະນຸລັກ ແລະ ການສະຫງວນ ເພື່ອໃຫ້ຂະແໜງການຫັດຖະກໍາມີການຂະຫຍາຍຕົວ ຢ່າງຍືນຍົງ.

ມາດຕາ 6. ຫຼັກການກ່ຽວກັບວຽກງານຫັດຖະກຳ

ວຽກງານຫັດຖະກຳ ຕ້ອງດຳເນີນຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງ ແລະ ພັດທະນາການຜະລິດຫັດຖະກຳແບບຍືນຍົງ ;
2. ຮັບປະກັນການປົກປັກຮັກສາສິ່ງແວດລ້ອມ;
3. ອະນຸລັກ, ປົກປັກຮັກສາຫັດຖະກຳທີ່ເປັນມູນເຊື້ອ ແລະ ມີເອກະລັກສະເພາະຂອງຊາດ ແລະ ຂອງຊົນເຜົ່າ ;
4. ຮັບປະກັນຄວາມປອດໄພຂອງຜູ້ຊົມໃຊ້ສິນຄ້າຫັດຖະກຳ;
5. ເຄົາລົບ ແລະ ປະຕິບັດ ສົນທິສັນຍາສາກົນທີ່ ສ.ປ.ປ. ລາວ ເປັນພາຄີ.

ມາດຕາ 7. ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ໂຮງງານຫັດຖະກຳຂະໜາດຕ່າງໆ ແລະ ໂຮງຊ່າງຫັດຖະກຳຄອບຄົວ ປະເພດຕ່າງໆ , ຊາວຊ່າງຫັດຖະກຳ ແລະ ຜູ້ຄຸ້ມຄອງວຽກງານຫັດຖະກຳ.

ມາດຕາ 8. ການຮ່ວມມືສາກົນ

ລັດ ຊຸກຍູ້ສົ່ງເສີມ ໃຫ້ມີການພົວພັນຮ່ວມມືກັບສາກົນ ໃນວຽກງານຫັດຖະກຳ ດ້ວຍການຍາດແຍ່ງການຊ່ວຍເຫຼືອ ແລກປ່ຽນຂໍ້ມູນຂ່າວສານ, ເຕັກໂນໂລຊີ, ບົດຮຽນ ແລະ ປະສົບການ, ຍົກລະດັບສີມືແຮງງານ ແລະ ການຄຸ້ມຄອງທຸລະກິດ, ການຕະຫຼາດ ແລະ ອື່ນໆ.

## ພາກທີ II
## ກິດຈະການຫັດຖະກຳ

### ໝວດທີ 1
### ໂຮງງານຫັດຖະກຳ ແລະ ໂຮງຊ່າງຫັດຖະກຳຄອບຄົວ

ມາດຕາ 9. ໂຮງງານຫັດຖະກຳ

ໂຮງງານຫັດຖະກຳ ແມ່ນ ສະຖານທີ່ ແລະ ອາຄານ ທີ່ທຳການຜະລິດຫັດຖະກຳ ດ້ວຍການນຳໃຊ້ແຮງງານຄົນເປັນຕົ້ນຕໍ ແຕ່ 10 ຄົນຂຶ້ນໄປ ແລະ ສາມາດນຳໃຊ້ເຄື່ອງຈັກຈຳນວນໜຶ່ງເປັນເຄື່ອງຊ່ວຍແຮງ.

ມາດຕາ 10. ຂະໜາດຂອງໂຮງງານຫັດຖະກຳ

ໂຮງງານຫັດຖະກຳ ຈັດເປັນ ສາມ ຂະໜາດ ຄື:

1. ໂຮງງານຫັດຖະກຳຂະໜາດ I ຊຶ່ງແມ່ນໂຮງງານຫັດຖະກຳຂະໜາດໃຫຍ່ ທີ່ມີແຮງງານລວມແຕ່ 200 ຄົນ ຂຶ້ນໄປ ແລະ ສາມາດນຳໃຊ້ເຄື່ອງຈັກຊ່ວຍແຮງຈຳນວນໜຶ່ງ ;
2. ໂຮງງານຫັດຖະກຳຂະໜາດ II ຊຶ່ງແມ່ນໂຮງງານຫັດຖະກຳຂະໜາດກາງ ທີ່ມີແຮງງານລວມ ແຕ່ 51 199 ຄົນ ແລະ ສາມາດນຳໃຊ້ເຄື່ອງຈັກຊ່ວຍແຮງຈຳນວນໜຶ່ງ ;